ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ: 2201/ກປຝ.

ນະຄອນຫຼວງວຽງຈັນ, ວັນທີ 20 SEP 2018

# ແຈ້ງການ

ຮຽນ: ທ່ານ ຫົວໜ້າ ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ເງື່ອນໄຂດ້ານສຸຂານາໄມພືດ ສຳລັບສົ່ງອອກ ໝາກນອດ (Passion fruit, *Passiflora edulis*) ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ ສະບັບເລກທີ 013/ສພຊ, ລົງວັນທີ່ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມປູກຝັງ ສະບັບເລກທີ 3825/ກປ ລົງວັນທີ 18 ພຶດສະພາ 2017;
- ອີງຕາມ ໜັງສືທາງການຂອງ ກົມວິຊາການກະເສດ ຣາຊະອານາຈັກໄທ ສະບັບເລກທີ AC 0914/1722 ລົງວັນທີ 3 ກໍລະກົດ 2018.

ກົມປູກຝັງ ຂໍຖືເປັນກຽດແຈ້ງມາຍັງ ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ ຊາບວ່າ: ປັດຈຸບັນການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ໂດຍສະເພາະແມ່ນ ພືດ ແລະ ຜະລິດຕະພັນພືດ ທີ່ນອນຢູ່ໃນບັນຊີພືດຄວບຄຸມ ຂອງຣາຊະອານາຈັກໄທ ຕ້ອງໄດ້ດຳເນີນການເຈລະຈາເຕັກນິກເປີດຕະຫຼາດ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດຕາມຫຼັກວິຊາການ. ສະນັ້ນ, ເພື່ອໃຫ້ສອດຄ່ອງກັບເງື່ອນໄຂການນຳເຂົ້າ ດ້ານສຸຂານາໄມພືດຂອງປະເທດຄູ່ຄ້າ ພ້ອມທັງອຳນວຍຄວາມສະດວກທາງດ້ານການຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດຂອງອົງການປ້ອງກັນພືດສາກົນ ທີ່ ສປປ ລາວ ແລະ ຣາຊະອານາຈັກໄທເປັນພາຄີ.

**ກົມປູກຝັງ ອອກແຈ້ງການດັ່ງນີ້:**

1. ຜູ້ສົ່ງອອກຕ້ອງໄດ້ຮັບອະນຸຍາດນຳເຂົ້າ ໝາກນອດ ຈາກກົມວິຊາການກະເສດ ຣາຊະອານາຈັກໄທ;
2. ການຂົນສົ່ງໝາກນອດທີ່ຈະສົ່ງອອກ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ ຕ້ອງສົ່ງຜ່ານດ່ານສາກົນທີ່ໄດ້ກຳນົດໄວ້;
3. ພື້ນທີ່ການຜະລິດຕ້ອງເປັນລະບົບການຜະລິດເພື່ອການຄ້າ ແລະ ຕັ້ງຢູ່ໃນພື້ນທີ່ຂອບເຂດຂອງປະເທດລາວ ໂດຍຜ່ານຂະບວນການຜະລິດ ຕາມມາດຕະຖານ ກະສິກຳທີ່ດີ (GAP);
4. ໄດ້ຜ່ານການຂຶ້ນທະບຽນ ຜູ້ສົ່ງອອກ, ຜູ້ຜະລິດ ແລະ ໂຮງເຮືອນຫຸ້ມຫໍ່ ໂດຍປະຕິບັດຕາມແຈ້ງການຂອງກົມປູກຝັງ ສະບັບເລກທີ 2313/ກປຝ ລົງວັນທີ 08 ພະຈິກ 2016;
5. ລະບົບໂຮງເຮືອນຫຸ້ມຫໍ່ ສຳລັບສົ່ງອອກໝາກນອດ ໄປຍັງ ຣາຊາອານາຈັກໄທ ຕ້ອງມີຂັ້ນຕອນ ແລະ ມາດຕະການຈັດຕັ້ງປະຕິບັດທີ່ດີ (SOP);
6. ລະບົບການເກັບຮັກສາເອກະສານ ເພື່ອສາມາດກວດກາ ແລະ ປະເມີນໃນການສົ່ງອອກ ຄັ້ງຕໍ່ໄປ;

7. ສຳລັບການຫຸ້ມຫໍ່ ແລະ ກາໝາຍ ໂດຍສະເພາະວັດສະດຸທີ່ໃຊ້ຫຸ້ມຫໍ່ ແລະ ພາເລດຮອງແກດສິນຄ້າ ຕ້ອງເປັນອັນໃໝ່ທຸກຄັ້ງທີ່ສົ່ງອອກ ແລະ ຕາມມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ (ISPMs);

8. ຊຸດສິນຄ້າທີ່ຈະສົ່ງອອກ ຫ້າມມີດິນ ຫຼື ວັດຖຸອື່ນຕິດໄປກັບສິນຄ້າ ເຊັ່ນ: ໃບພືດ, ເມັດພືດ, ແລະ ສິ້ນສ່ວນອື່ນໆ ທີ່ເປັນສັດຕູພືດ ກັກກັນຂອງ ປະເທດໄທ;

9. ວັດຖຸຫຸ້ມຫໍ່ປະເພດແກັດເຈ້ຍ ຕ້ອງລະບຸເນື້ອໃນລາຍລະອຽດຄື: ຊື່ປະເທດສົ່ງອອກ, ຊື່ບໍລິສັດທີ່ສົ່ງອອກ, ຊື່ພືດທີ່ສົ່ງອອກ, ເລກທະບຽນໂຮງເຮືອນຫຸ້ມຫໍ່ ແລະ ຜູ້ຜະລິດ;

10. ໃນຊຸດສິນຄ້າ ຕ້ອງພິມເອກະສານ ໃສ່ວ່າ "Export to Thailand"

11. ການສົ່ງອອກທຸກຄັ້ງ ຕ້ອງມີໃບຢັ້ງຢືນສຸຂານາໄມພືດ ຕົ້ນສະບັບອອກໃຫ້ໂດຍອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງ ສປປ ລາວ;

12. ການອອກໃບຢັ້ງຢືນສຸຂານາໄມພືດ ທຸກຄັ້ງຕ້ອງພິມຄຳວ່າ "*The consignment of passion fruit has been produced and prepared for export in accordance with the condition for import of passion fruit from Lao PDR to Thailand*" ໃສ່ໃນບ່ອນແຈ້ງເພີ່ມຕື່ມ (Additional Declare) ໃນໃບຢັ້ງຢືນສຸຂານາໄມພືດ;

13. ເມື່ອສິນຄ້າໄປເຖິງດ່ານຂອງຣາຊະອານາຈັກໄທ ເຈົ້າໜ້າທີ່ກັກກັນພືດຈະດຳເນີນການກວດກາຊຸດສິນຄ້າດັ່ງກ່າວເພື່ອຢັ້ງຢືນ ຄວາມຖືກຕ້ອງຂອງເອກະສານ ແລະ ກວດກາສັດຕູພືດ ຕາມລະບຽບການ;

14. ການກວດກາພືດຂອງຣາຊະອານາຈັກໄທ ແມ່ນຈະໄດ້ສຸ່ມເກັບຕົວຢ່າງຄື: ຖ້າສິນຄ້າມີຈຳນວນໜ້ອຍກວ່າ 1000 ຫົວໜ່ວຍຈະໄດ້ສຸ່ມເອົາ 450 ຕົວຢ່າງ (ຂຶ້ນກັບລັກສະນະຂອງຊຸດສິນຄ້າ ແລະ ການຫຸ້ມຫໍ່ ສິນຄ້າສົ່ງອອກ) ແຕ່ຖ້າຊຸດສິນຄ້າຫຼາຍກວ່າ 1000 ຫົວໜ່ວຍ ຂຶ້ນໄປແມ່ນຈະສຸ່ມເອົາ 600 ຕົວຢ່າງ;

15. ຊຸດສິນຄ້າໝາກນອດ ຕ້ອງບໍ່ມີການຕິດແປດສັດຕູພືດກັກກັນຂອງ ຣາຊະອານາຈັກໄທ ແຕ່ຖ້າກວດພົບສັດຕູພືດ ໃນຊຸດສິນຄ້າດັ່ງກ່າວ ຈະໄດ້ສົ່ງຕໍ່ໄປວິໄຈໃນຫ້ອງທົດລອງ ຊຶ່ງຈະໃຊ້ເວລາລໍຖ້າຜົນການວິໄຈ;

16. ພາຍຫຼັງການນຳເຂົ້າທີມງານວິຊາການຈາກປະເທດໄທຈະໄດ້ມາຕິດຕາມ, ກວດສອບປະເມີນລະບົບການສົ່ງອອກຂອງ ສປປ ລາວ ເຊິ່ງຜູ້ສົ່ງອອກຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ໃນເວລາລົງປະເມີນ ແລະ ກວດສອບ ໃນແຕ່ລະໄລຍະ;

17. ຂະແໜງປູກຝັງແຂວງ, ນະຄອນຫຼວງ ຕ້ອງລາຍງານການຈັດຕັ້ງປະຕິບັດໃນການສົ່ງອອກໝາກນອດ ແລະ ພືດ ຫຼື ຜະລິດຕະພັນພືດອື່ນ ມາຍັງກົມປູກຝັງທຸກໆ 3 ເດືອນ, 6 ເດືອນ.

18. ຖ້າຜູ້ສົ່ງອອກ ຕ້ອງການຂໍ້ມູນເພີ່ມເຕີມໃຫ້ຕິດຕໍ່ພົວພັນນຳກົມປູກຝັງ ຫຼື ເຂົ້າໄປເບິ່ງໃນເວບໄຊ: www.Laotradeportal.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ / ກົມປູກຝັງ

ວິໄລສຸກ ເດັນນະວົງ

ບ່ອນສົ່ງ:

| | |
|---|---|
| - ລັດຖະມົນຕີ ແລະ ຮອງລັດຖະມົນຕີ | 01 ສະບັບ (ເພື່ອລາຍງານ). |
| - ຫ້ອງການກະຊວງ ກປ | 01 ສະບັບ (ເພື່ອຊາບ). |
| - ກົມນະໂຍບາຍ ແລະ ນິຕິກຳ | 01 ສະບັບ (ເພື່ອຊາບ). |
| - ກົມແຜນການ ແລະ ການເງິນ | 01 ສະບັບ (ເພື່ອຊາບ). |
| - ກົມກວດກາ | 01 ສະບັບ (ເພື່ອຊຸກຍູ້ຕິດຕາມ). |
| - ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ | 01 ສະບັບ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ). |
| - ຂະແໜງປູກຝັງແຂວງ, ນະຄອນຫຼວງ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ). |
| - ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ | 01 ສະບັບ (ເພື່ອຕິດຕາມ ແລະ ເຜີຍແຜ່). |
| - ເກັບມ້ຽນ | 01 ສະບັບ. |